# ລັດຖະບານແຫ່ງ ສປປ ລາວ

# ກະຊວງ ສຶກສາ ແລະ ກິລາ
# ແລະ
# ກະຊວງແຮງງານ ແລະ ສະຫວັດດີການສັງຄົມ

# ໂຄງການທັກສະບູລິມະສິດ ສຳລັບການເຕີບໂຕ ຂອງ ສປປ ລາວ

# (Lao PDR Priority Skills for Growth)

# Project (P172774)

# ແຜນພັນທະດ້ານສິ່ງແວດລ້ອມ ແລະສັງຄົມ

# ມັງກອນ 2022

## ແຜນພັນທະທາງສິ່ງແວດລ້ອມ ແລະສັງຄົມ

1. ລັດຖະບານ ແຫ່ງ ສປປ ລາວ ຈະປະຕິບັດ ໂຄງການ "ທັກສະບຸລິມະສິດ ສຳລັບການເຕີບໂຕ ຂອງ ສປປ ລາວ" ("Lao PDR Priority Skills for Growth Project") (P172774), (**ໂຄງການ**), ໂດຍມີສ່ວນຮ່ວມ ຂອງກະຊວງສຶກສາ ແລະກິລາ (MOES) ແລະ ກະຊວງແຮງງານ ແລະສະຫວັດດີການສັງຄົມ. ທະນາຄານສາກົນ ເພື່ອການຟື້ນຟູ ແລະພັດທະນາ (International Bank for Reconstruction and Development) (ຊຶ່ງຕໍ່ໄປຈະເອີ້ນ ວ່າ ທະນາຄານ) ແລະສະມາຄົມ ເພື່ອການພັດທະນາສາກົນ (ຊຶ່ງຕໍ່ໄປຈະເອີ້ນ ວ່າ ສະມາຄົມ) ຕົກລົງເຫັນດີສະໜອງທຶນ ແກ່ໂຄງການດັ່ງກ່າວ.

2. ລັດຖະບານ ແຫ່ງ ສປປ ລາວ ຈະປະຕິບັດບັນດາມາດຕະການ ແລະວຽກງານ ສຳຄັນຕົ້ນຕໍ ເພື່ອເຮັດໃຫ້ໂຄງການນີ້ ຖືກຈັດຕັ້ງປະ ຕິບັດ ໂດຍສອດຄ່ອງກັບມາດຕະຖານທາງສິ່ງແວດລ້ອມ ແລະສັງຄົມ (**ESSs**). ແຜນພັນທະທາງສິ່ງແວດລ້ອມ ແລະສັງຄົມ ສະ ບັບນີ້ (**ESCP**) ກຳນົດມາດຕະການ ແລະວຽກງານ ສຳຄັນຕົ້ນຕໍ, ເອກະສານ ຫຼື ແຜນ ສະເພາະ, ພ້ອມທັງ ກຳນົດເວລາ ສຳລັບ ແຕ່ລະມາດຕະການ ແລະວຽກງານ.

3. ນອກຈາກນັ້ນ, ລັດຖະບານ ແຫ່ງ ສປປ ລາວ ຈະປະຕິບັດໂດຍສອດຄ່ອງກັບ ຂໍ້ກຳນົດຕ່າງໆ ຂອງເອກະສານດ້ານສິ້ງແວດລ້ອມ ແລະ ສັງຄົມ (E&S) ອຕ່າງໆ ທີ່ຮຽກຮ້ອງພາຍໃຕ້ ກອບແຜນງານ ສີງແວດລ້ອມ ແລະ ສັງຄົມ (ESF) ແລະທີ່ຖືກອ້າງອີງເຖິງ ໃນ ESCP ສະບັບນີ້ ເຊັ່ນ: ຂອບການຄຸ້ມຄອງສິ່ງແວດລ້ອມ ແລະສັງຄົມ ແລະແຜນການເຂົ້າຮ່ວມຂອງຜູ້ມີສ່ວນຮ່ວມ (SEP), ແລະ ບັນດາຂອບເວລາ ທີ່ກຳນົດໃນເອກະສານ E&S ເຫຼົ່ານັ້ນ.

4. ລັດຖະບານ ແຫ່ງ ສປປ ລາວ ມີຄວາມຮັບຜິດຊອບ ຕໍ່ການປະຕິບັດທຸກຂໍ້ກຳນົດ ຂອງ ESCP ເຖິງແມ້ວ່າໃນມາດຕະການ ແລະ ວຽກງານ ສະເພາະ ແມ່ນປະຕິບັດໂດຍໂດຍບັນດາກະຊວງ ທີ່ໄດ້ກ່າວເຖິງໃນວັກທີ 1 ຂ້າງເທິງ.

5. ການປະຕິບັດມາດຕະການ ແລະວຽກງານສຳຄັນຕົ້ນຕໍ ທີ່ຖືກກຳນົດໄວ້ ໃນ ESCP ສະບັບນີ້ ຈະຖືກຕິດຕາມກວດກາ ແລະລາຍງານ ໃຫ້ແກ່ສະມາຄົມ ໂດຍລັດຖະບານ ແຫ່ງ ສປປ ລາວ ຕາມທີ່ກຳນົດໄວ້ ໃນ ESCP ສະບັບນີ້ ແລະເງື່ອນໄຂ ຂອງສັນຍາກົດໝາຍ, ແລະສະມາຄົມ ຈະຕິດຕາມກວດກາ ແລະປະເມີນຜົນ ຄວາມຄືບໜ້າ ແລະການປະຕິບັດສຳເລັດ ມາດຕະການ ແລະວຽກງານ ສຳຄັນຕົ້ນຕໍ ຕະຫຼອດໄລຍະ ຂອງການປະຕິບັດໂຄງການ.

6. ດັ່ງທີ່ຕົກລົງເຫັນດີນຳກັນ ໂດຍສະມາຄົມ ແລະ ລັດຖະບານ ແຫ່ງ ສປປ ລາວ, ESCP ສະບັບນີ້ ອາດຖືກທົບທວນຄືນໃໝ່ ໃນບາງຄັ້ງ ໃນໄລຍະການຈັດຕັ້ງປະຕິບັດໂຄງການ ເພື່ອໃຫ້ມັນແທດເໝາະກັບການປ່ຽນແປງຕ່າງໆ ໃນການຄຸ້ມຄອງໂຄງການ ແລະ ສະພາບການຕ່າງໆ ທີ່ບໍ່ສາມາດຄາດໄວ້ລວ່ງໜ້າ ຫຼື ເພື່ອຕອບຮັບກັບການປະເມີນຜົນການປະຕິບັດໂຄງການ ທີ່ເຮັດພາຍໃຕ້ ESCP ສະບັບນີ້ເອງ. ໃນກໍລະນີດັ່ງກ່າວ, ລັດຖະບານ ແຫ່ງ ສປປ ລາວ ຫຼື ຕົວແທນຕາງໜ້າຂອງຕົນ ຈະຕົກລົງເຫັນດີ ກັບ ສະມາຄົມ ແລະປັບປຸງ ESCP ສະບັບນີ້ ເພື່ອໃຫ້ສອດຄ່ອງກັບການປ່ຽນແປງເຫຼົ່ານັ້ນ. ການຕົກລົງເຫັນດີໃຫ້ມີການປ່ຽນແປງ ESCP ຈະຖືກເກັບກຳບັນທຶກເປັນເອກະສານ ໂດຍຜ່ານການແລກປ່ຽນຈົດໝາຍທີ່ລົງລາຍເຊັນ ຮ່ວມກັນ ລະຫວ່າງ ສະມາຄົມ ແລະ ລັດຖະບານ ແຫ່ງ ສປປ ລາວ ຫຼື ຕົວແທນຕາງໜ້າຂອງຕົນ. ລັດຖະບານ ແຫ່ງ ສປປ ລາວ ຫຼື ຕົວແທນຕາງໜ້າຂອງຕົນ ຈະເຜີຍແຜ່ ESCP ສະບັບປັບປຸງ ຢ່າງທັນການ.

7. ໃນກໍລະນີ ທີ່ການປ່ຽນແປງໂຄງການ, ສະພາບການທີ່ບໍ່ຄາດໄວ້ລ່ວງໜ້າ ຫຼື ຜົນການປະຕິບັດໂຄງການ ຫາກພາໃຫ້ມີການປ່ຽນແປງ ດ້ານຄວາມສ່ຽງ ແລະຜົນກະທົບ ໃນລະຫວ່າງການຈັດຕັ້ງປະຕິບັດໂຄງການ, ລັດຖະບານ ແຫ່ງ ສປປ ລາວ ຈະສະໜອງທຶນເພີ້ມເຕີມ, ຕາມຄວາມຈຳເປັນ, ເພື່ອປະຕິບັດວຽກງານ ແລະມາດຕະການຕ່າງໆ ເພື່ອແກ້ໄຂຄວາມສ່ຽງ ແລະຜົນກະທົບເຫຼົ່ານັ້ນ.

ອັກສອນຫຍໍ້ພາສາອັງກິດ:

| | |
|---|---|
| MOES | ກະຊວງສຶກສາ ແລະກິລາ |
| MOLSW | ກະຊວງແຮງງານ ແລະສະຫວັດດີການສັງຄົມ |
| PCU | ໜ່ວຍງານປະສານງານໂຄງການ |
| SDED | ກົມພັດທະນາທັກສະ ແລະຈ້າງງານ |
| TVED | ກົມອາຊີວະສຶກສາ |

| ມາດຕະການແລະວຽກງານສຳຄັນຕົ້ນຕໍ | | ຂອບເວລາ | ພາກສ່ວນຮັບຜິດຊອບ |
|---|---|---|---|
| ການຕິດຕາມ ແລະການລາຍງານ | | | |
| A | **ການລາຍງານເປັນປະຈຳ**<br>ກະກຽມ ແລະສົ່ງບົດລາຍງານການຕິດຕາມກວດກາ ການປະຕິບັດວຽກງານຂອງໂຄງການ ດ້ານສິ່ງແວດລ້ອມ, ສັງຄົມ, ສຸຂະພາບ ແລະຄວາມປອດໄພ (ESHS) ໃຫ້ແກ່ສະມາຄົມ ຢ່າງເປັນປະຈຳ, ລວມທັງ ການຈັດຕັ້ງປະຕິບດແຜນ ESCP, ຄວາມຄືບໜ້າຂອງການ ກະກຽມ ແລະປະຕິບັດເອກະກສານ E&S ຕາມການຮຽກຮ້ອງພາຍໃຕ້ ESCP (ລວມ ທັງການແບ່ງປັນຜົນປະໂຫຍດຂອງໂຄງການ), ກິດຈະກຳ ຂອງການເຮັດວຽກຮ່ວມກັບ ບັນດາຜູ້ມີສ່ວນຮ່ວມ ແລະການເຄື່ອນໄຫວ ຂອງກົນໄກແກ້ໄຂການຮ້ອງທຸກ (GRMs). | • ບົດລາຍງານຂອງສອງໄຕມາດທຳອິດ ແລະຕາມດ້ວຍບົດລາຍງານທົກ ເດືອນ ທີ່ຕ້ອງສົ່ງຕະຫຼອດໄລຍະຂອງ ໂຄງການ | • PCU/TVED ຂອງກະຊວງ MOES/EDED ຂອງກະຊວງ MOLSW<br>• ວິທະຍາໄລTVET |
| B | **ເຫດການທີ່ເກີດຂຶ້ນ ແລະອຸບັດຕິເຫດ**<br>ແຈ້ງໃຫ້ສະມາຄົມຊາບຢ່າງທັນການ ກ່ຽວກັບທຸກເຫດການ ຫຼື ອຸບັດຕິເຫດ ທີ່ພົວພັນກັບ ໂຄງການ ຊຶ່ງມີ ຫຼື ອາດຈະມີຜົນກະທົບດ້ານລົບຮ້າຍແຮງ ຕໍ່ສິ່ງແວດລ້ອມ, ຊຸມຊົນ ຫຼື ປະຊາຊົນ, ລວມທັງ ຜູ້ເຂົ້າຝຶກອົບຮົມໃນສູນ ຫລື ໂຮງຮຽນຝຶກອົບຮົມວິຊາຊີບ (TVET), ຄູອາຈານ ແລະກຳມະກອນ ທີ່ເຮັດວຽກ ກໍ່ສ້າງ/ບູລະນະໂຮງຮຽນ. ອຸບັດຕິ ເຫດ ທີ່ມີຜົນກະທົບດ້ານລົບຮ້າຍແຮງ, ລວມທັງ ອຸບັດຕິເຫດດ້ານການສັນຈອນ ຫຼື ການ ກໍ່ສ້າງ/ສ້ອມແປງບູລະນະ ທີ່ພົວພັນກັບກັບໂຄງການ, ທີ່ເກີດຂຶ້ນໃນໂຄງການ ຊຶ່ງພາໃຫ້ ເກີດມີການບາດເຈັບຮ້າຍແຮງ ຫຼື ການເສຍຊີວິດ. ອຸບັດຕິເຫດ ທີ່ມີຜົນກະທົບດ້ານລົບ ຮ້າຍແຮງ ລວມທັງ ການກໍ່ອາສະຍາກຳ ເຊັ່ນ: ການໃຊ້ຄວາມຮຸນແຮງ, ການຂູດຮີດທາງ ເພດ ແລະການຮຸກຮານທາງເພດ ຕໍ່ບຸກຄົນທີ່ພົວພັນກັບໂຄງການ (ນັກສຶກສາ, ແມ່ຍິງ, ຄູ ອາຈານ). ການແຈ້ງ ຈະຕ້ອງມີລາຍລະອຽດພໍພຽງ ກ່ຽວກັບເຫດການ ຫຼື ອຸບັດຕິເຫດ, ທີ່ ຊີ້ໃຫ້ເຫັນເຖິງມາດຕະການຮີບດ່ວນທີ່ໄດ້ຖືກປະຕິບັດ ຫຼື ວາງແຜນຈະປະຕິບັດເພື່ອແກ້ໄຂ , ແລະທຸກຂໍ້ມູນ ທີ່ສະໜອງໂດຍຜູ້ຮັບເໝົາກໍ່ສ້າງ ແລະອົງກອນທີ່ເປັນຜູ້ຊີ້ນຳ, ອີງຕາມ ຄວາມແທດເໝາະ. ຈາກນັ້ນ, ອີງຕາມການສະເໜີຂໍ ຂອງສະມາຄົມ, ພາກສ່ວນ ຮັບຜິດຊອບ ຈະກະກຽມບົດລາຍງານ ກ່ຽວກັບເຫດການ ຫຼື ອຸບັດຕິເຫດ ພ້ອມທັງ ສະເໜີທຸກມາດຕະການປ້ອງກັນ ບໍ່ໃຫ້ເກີດຄືນອີກໃນຕໍ່ໜ້າ. | • ແຈ້ງໃຫ້ສະມາຄົມຊາບບໍ່ເກີນ 48 ຊົ່ວໂມງ ພາຍຫຼັງໄດ້ຮັບຊາບຂ ກ່ຽວ ກັບເຫດການ ຫຼື ອຸບັດຕິເຫດ; ສົ່ງ ບົດລາຍງານຕາມເວລາອັນຄວນ ຕາມການສະເໜີ ຂອງສະມາຄົມ. | • PCU/TVED ຂອງກະຊວງ MOES/EDED ຂອງກະຊວງ MOLSW<br>ວິທະຍາໄລTVET |
| C | **ບົດລາຍງານປະຈຳເດືອນ ຂອງຜູ້ຮັບເໝົາ** | • ລາຍງານທຸກທົກເດືອນ (ປີທີ 1-3), ປະຈຳປີ (ປີ 4-5); | • ຜູ້ຮັບເໝົາກໍ່ສ້າງ |

| | ມາດຕະການແລະວຽກງານສຳຄັນຕົ້ນຕໍ | ຂອບເວລາ | ພາກສ່ວນຮັບຜິດຊອບ |
|---|---|---|---|
| | • ຈະມີການສະຫຼຸບໃນບົດລາຍງານຢ່າງເປັນປະຈຳ ກ່ຽວກັບຄວາມຄືບໜ້າຂອງວຽກກໍ່ສ້າງ/ສ້ອງແປງບູລະນະ ພາຍໃຕ້ ລາຍການ A. | • ບົດລາຍງານປະຈຳເດືອນ ຂອງຜູ້ຮັບເໝົາກໍ່ສ້າງ ສະໜອງໃຫ້ຕາມເວລາອັນຄວນ ຕາມການສະເໜີຂໍຂອງສະມາຄົມ. | • PCU/TVED ຂອງກະຊວງ MOES/EDED ຂອງກະຊວງ MOLSW<br>• ວິທະຍາໄລTVET |
| **ESS1: ການປະເມີນ ແລະບໍລິຫານ ຄວາມສ່ຽງ ແລະຜົນກະທົບດ້ານສິ່ງແວດລ້ອມ ແລະສັງຄົມ** | | | |
| 1.1 | **ໂຄງຮ່າງການຈັດຕັ້ງ**<br>ແຕ່ງຕັ້ງຜູ້ຈັດການ 1 ຄົນ ດ້ານ E&S ເພື່ອຮັບຜິດຊອບການຈັດຕັ້ງປະຕິບັດໂດຍລວມຂອງເອກະສານ E&S<br>ແຕ່ງຕັ້ງຜູ້ກວດກາ ຕິດຕາມ E&S 2 ຄົນ (ຫຼື ຜູ້ປະສານງານຕົ້ນຕໍ), ຜູ້ໜຶ່ງ ຢູ່ ກົມຝຶກອົບຮົມວິຊາຊີບ (TVED) ແລະອີກຜູ້ໜຶ່ງ ຢູ່ ກົມພັດທະນາຝີມືແຮງງານ (SDED) ເພື່ອຮັບຜິດຊອບການຄຸ້ມຄອງ ແລະຊປະຈຳວັນ ວຽກງານດ້ານສິ່ງແວດລ້ອມ ແລະສັງຄົມ ຂອງໂຄງການ.<br>ຈັດສັນພະນັກງານສີ່ທ່ານ ເພື່ອຊ່ວຍວຽກຜູ້ຈັດການ E&S ແລະຜກວດກາ ຕິດຕາມວຽກງານ E&S.<br>ຈັດຈ້າງທີ່ປຶກສາ ທີ່ມີຄວາມຮູ້ດ້ານມາດຕະຖານທາງສິ່ງແວດລ້ອມ ແລະສັງຄົມ ເພື່ອໃຫ້ການຊ່ວຍເຫຼືອເປັນໄລຍະ ລວມທັງ ການຕິດຕາມກວດກາ, ການລາຍງານ ແລະຝຶກອົບຮົມ.<br>ທີມງານຄຸ້ມຄອງ E&S ທີ່ກ່າວມາຂ້າງເທິງນີ້ ຈະເຮັດວຽກເປັນສ່ວນໜຶ່ງ ຂອງໂຄງຮ່າງການຈັດຕັ້ງລວມ ຂອງໂຄງການ. | • ແຕ່ງຕັ້ງທີມງານ E&S ກ່ອນມື້ມີຜົນສັກສິດຂອງໂຄງການ<br>• ຕ້ອງສຳເລັດການບັນຈຸທີ່ປຶກສາ ພາຍໃນ 90 ພາຍຫຼັງມື້ມີຜົນສັກສິດຂອງໂຄງການ. | • PCU/TVED ຂອງກະຊວງ MOES/EDED ຂອງກະຊວງ MOLSW<br>• PCU/TVED ຂອງກະຊວງ MOES/EDED ຂອງກະຊວງ MOLSW |
| 1.2 | **ຂອບການຄຸ້ມຄອງສິ່ງແວດລ້ອມ ແລະສັງຄົມ**<br>- ກະກຽມ, ເຜີຍແຜ່, ປຶກສາຫາລື, ຮັບຮອງ, ປັບປຸງ, ຕາມຄວາມຈຳເປັນ, ແລະປະຕິບັດ ຂອບການຄຸ້ມຄອງສິ່ງແວດ ລ້ອມ ແລະສັງຄົມ (ESMF) ສໍາລັບໂຄງການຕາມວິທີການທີ່ຮັບເອົາໄດ້ ໂດຍສະມາຄົມ. ESMF ລວມມີ: | • ກ່ອນການປະເມີນໂຄງການ ແລະຈັດຕັ້ງປະຕິບັດ ແລະປັບປຸງ ຕາມຄວາມຈຳເປັນຕະຫຼອດໄລຍະ ຂອງການປະຕິບັດໂຄງການ. | • ວິທະຍາໄລTVET<br>• PCU/TVED ຂອງກະຊວງ MOES/EDED ຂອງກະຊວງ MOLSW |

| | ມາດຕະການແລະວຽກງານສຳຄັນຕົ້ນຕໍ | ຂອບເວລາ | ພາກສ່ວນຮັບຜິດຊອບ |
|---|---|---|---|
| | - ມາດຕະຖານການປະພຶດດ້ານສິ່ງແວດລ້ອມ ແລະສັງຄົມ ສຳລັບວຽກກໍ່ສ້າງຂະໜາດນ້ອຍ<br>- ລະບຽບການຄຸ້ມຄອງແຮງງານ<br>- ມາດຕະຖານການປະພຶດດ້ານການປົກປ້ອງເດັກ ແລະການໃຊ້ຄວາມຮູນແຮງທາງເພດ<br>- ຝຶກອົບຮົມະດ້ານສຸຂະພາບ ແລະຄວາມປອດໄພ<br>- ການວາງແຜນຮັບມືກັບເຫດການສຸກເສີນ<br>- ວຽກງານດ້ານດິນຟ້າອາກາດ | | |
| 1.3 | **ເຄື່ອງມື ແລະເອກະສານຄຸ້ມຄອງຜົນກະທົບ**<br>ດຳເນີນການກວດກາ ແລະປະເມີນຄາຄວາມສ່ຽງ ແລະຜົນກະທົບທາງສິ່ງແວດລ້ອມ ແລະສັງຄົມ ຂອງກິດຈະກຳໂຄງການ ພ້ອມທັງ ກະກຽມ, ຮັບຮອງເອົາ, ປັບປຸງ ຕາມຄວາມຈຳເປັນ ແລະປະຕິບັດ.<br>ດຳເນີນການປະເມີນທາງສັງຄົມແບບລົງເລິກ ແລະປັບປຸງ ESMF, ພາກ 5.1: ການປະເມີນທາງສັງຄົມ, ຕາຕະລາງ 5-1: ການປະເມີນຄວາມສ່ຽງ ແລະຜົນກະທົບ ES ແລະມາດຕະການຫຼຸດຜ່ອນທີ່ສະເໜີ, ແລະພາກ 8.1: ລະບຽບການຄຸ້ມຄອງແຮງງານ.<br>ພັດທະນາບົດແນະນຳດ້ານວິທີການ ແລະ ມາດຕະການທີ່ມີສ່ວນຮ່ວມ, ເປັນທຳ ແລະ ໂປ່ງໃສ ເພື່ອຮັບປະກັນວ່າບັນດາຊົນເຜົ່າ ແລະ ຜູ້ມີຄວາມສ່ຽງ ໄດ້ເຂົ້າເຖິງ ແລະ ໄດ້ຮັບຜົນປະໂຫຍດຈາກການຊ່ວຍເຫຼືອໂຄງການ ທາງດ້ານການທົດລອງເຮັດທຸລະກິດສ່ວນຕົວ (ຄືກັນກັບພາຍໃຕ້ຂໍ້ 7.1)<br>ເຄື່ອງມື ແລະເອກະສານ ESMF ແມ່ນນຳໃຊ້ຕະຫຼອດໄລຍະການປະຕິບັດໂຄງການ.<br>ESMF ຈະໄດ້ຮັບການທົບທວນ ທຸກປີ ແລະອີງຕາມຄວາມຈຳເປັນ ຕາມທີ່ມີການປັບປຸງການປະເມີນຜົນທາງສິ່ງແວດລ້ອມ ແລະສັງຄົມ. | • ດຳເນີນກວດກາ ແລະປະເມີນຄວາມສ່ຽງ ແລະຜົນກະທົບທາງສສັງຄົມ (SA) ແລະປັບປຸງ ESMF ກ່ອນສິ້ນສຸດການປະເມີນໂຄງການ.<br>• ກະກຽມ, ເຜີຍແຜ່, ປຶກສາຫາລື ແລະ ຮັບຮອງເອົາ ເອກະສານ ເຄື່ອງມື E&S ສະເພາະແຕ່ລະທີ່ຕັ້ງ ຫຼື ສະເພາະອົງປະກອບໂຄງການ (ລວມທັງບົດແນະນຳທາງດ້ານເຕັກນິກ ສຳລັບການທົດລອງເຮັດທຸລະກິດສ່ວນຕົວ), ແລະສະເໜີ ຕໍ່ສະມາຄົມ ເພື່ອພິຈາລະນາອະນຸມັດ ກ່ອນການເລີ່ມໂຄງການຍ່ອຍສະເພາະ ຫຼື ກິດຈະກຳສະເພາະ.<br>• ປະຕິບັດເອກະສານ E&S ຕະຫຼອດໄລຍະການປະຕິບັດໂຄງການ. | • PCU/TVED ຂອງກະຊວງ MOES/EDED ຂອງກະຊວງ MOLSW<br>• ວິທະຍາໄລTVET |

| | ມາດຕະການແລະວຽກງານສຳຄັນຕົ້ນຕໍ | ຂອບເວລາ | ພາກສ່ວນຮັບຜິດຊອບ |
|---|---|---|---|
| 1.4 | ການຄຸ້ມຄອງຜູ້ຮັບເໝົາ<br>ເອົາມາດຕະຖານການປະຕິບັດດ້ານສິ່ງແວດລ້ອມ ແລະສັງຄົມ ແລະລະບຽບການຄຸ້ມຄອງແຮງງານ ຂອງ ESMF ເຂົ້າໃນເອກະສານຈັດຊື້ຈັດຈ້າງ ແລະສັນຍາກໍ່ສ້າງ ຫລື ການບູລະນະສ້ອມແປງ.<br>ຕິດຕາມວຽກກໍ່ສ້າງຢ່າງເປັນປະຈຳ. | • ໃນລະຫວ່າງການຈັດຊື້ຈັດຈ້າງ ສຳລັບກິດຈະກຳຂອງໂຄງການ, ແລະ ຕ້ອງປະຕິບັດຕາມຕະຫຼອດໄລຍະການປະຕິບັດກິດຈະກຳເຫຼົ່ານັ້ນ. | • PCU/TVED/MOES |
| | ການສະໜອງທຶນເພື່ອຕອບໂຕ້ກັບເຫດການສຸກເສີນ (CERC)<br><br>a. ກະກຽມ ແລະປະຕິບັດຄູ່ມື CERC ລວມທັງ ການປະເມີນ ດ້ານສິ່ງແວດລ້ອມ, ສັງຄົມ, ສຸຂະພາບ ແລະຄວາມປອດໄພ (ESHS) ແລະເອກະສານເພີ່ມເຕີມ CERC-ESMF/ESMF ທີ່ຕ້ອງປະຕິບັດສຳລັບອົງປະກອບ CERC, ໂດຍສອດຄ່ອງກັບ ESSs.<br><br>b. ກະກຽມ, ເຜີຍແຜ່, ປຶກສາຫາລື ແລະຮັບຮອງເອົາ ທຸກແຜນຄຸ້ມຄອງສິ່ງແວດລ້ອມ ແລະສັງຄົມ ຫຼື ເອກະສານ (E&S) ຊຶ່ງອາດຖືກຮຽກຮ້ອງ ສຳລັບກິດຈະກຳຕ່າງໆ ພາຍໃຕ້ອົງປະກອບ CERC ຂອງໂຄງການ, ໂດຍສອດຄ່ອງກັບຄູ່ມື CERC ແລະສັນຍາເພີ່ມເຕີມດ້ານ CERC-ESMF ແລະ ESSs, ແລະປະຕິບັດມາດຕະການ ແລະວຽກງານ ທີ່ຮຽກຮ້ອງພາຍໃຕ້ ແຜນຄຸ້ມຄອງ ຫຼື ເອກະສານ E&S ດັ່ງກ່າວ, ພາຍໃນຂອບເວລາ ຕາມທີ່ລະບຸໄວ້ໃນແຜນຄຸ້ມຄອງ ຫຼື ເອກະສານ E&S ດັ່ງກ່າວ. | • ໝູນໃຊ້ຄູ່ມື CERC ໃນຮູບແບບ ແລະຕາມເນື້ອໃນ ທີ່ຮັບຮອງເອົາໄດ້ ໂດຍທະນາຄານໂລກ ພາຍຫຼັງມື້ມີຜົນສັກສິດຂອງໂຄງການ ແລະກ່ອນການປະຕິບັດກິດຈະກຳCERC .<br><br>• ຈະມີການກະກຽມ, ເຜີຍແຜ່, ປຶກສາຫາລື ແລະຈາກນັ້ນ ຮັບຮອງເອົາແຜນຄຸ້ມຄອງ ຫຼື ເອກະສານ E&S ກ່ອນມີການປະຕິບັດກິດຈະກຳໂຄງການພາຍໃຕ້ ອົງປະກອບ CERC. ແຜນຄຸ້ມຄອງ ຫຼື ເອກະສານ E&S ຈະໄດ້ຮັບການປະຕິບັດ ອີງຕາມເງື່ອນໄຂຕະຫຼອດໄລຍະການປະຕິບັດໂຄງການ. | • PCU/TVED ຂອງກະຊວງ MOES/EDED ຂອງກະຊວງ MOLSW<br>• ວິທະຍາໄລTVET |
| | **ESS2:ເງື່ອນໄຂການອອກແຮງງານ ແລະເຮັດວຽກ** | | |
| 1.5 | ລະບຽບການຄຸ້ມຄອງແຮງງານ<br>ຮັບຮອງເອົາ ແລະປະຕິບັດ, ຕາມຄວາມຈຳເປັນ, ປັບປຸງລະບຽບການຄຸ້ມຄອງແຮງງານ ທີ່ຕ້ອງຖືກນຳໃຊ້ ກັບແຕ່ລະກຸ່ມກຳມະກອນ, ຜູ້ເຂົ້າຮ່ວມຝຶກອົບຮົມ ແລະພະນັກງານ ຂອງໂຄງການ ຕາມທີ່ລະບຸໄວ້ໃນ ESMF. | • ປັບປຸງລະບຽບການຄຸ້ມຄອງແຮງງານ ໃນ ESMFເພື່ອໃຫ້ສອດຄ່ອງກັບ | ຢູ່ບ່ອນເຮັດວຽກ: |

| ມາດຕະການແລະວຽກງານສຳຄັນຕົ້ນຕໍ | | ຂອບເວລາ | ພາກສ່ວນຮັບຜິດຊອບ |
|---|---|---|---|
| | | ຜົນໄດ້ຮັບ ຂອງ SA ແບບລິງເລິກ ກ່ອນເກົ່າ ກ່ອນຕອນທ້າຍຂອງການປະເມີນໂຄງການ.<br>• ລະບຽບການຄຸ້ມຄອງແຮງງານສະເພາະ ກ່ອນການປະຕິບັດກິດຈະກຳໂຄງການ.<br>• ປະຕິບັດຕະຫຼອດໄລຍະປະຕິບັດໂຄງການ | • PCU/TVED ຂອງກະຊວງ MOES/EDED ຂອງກະຊວງ MOLSW<br>• ນາຍຈ້າງ<br>• ວິທະຍາໄລTVET<br>ຢູ່ໄຊກໍ່ສ້າງ:<br>• ວິທະຍາໄລTVET<br>• PCU/TVED ຂອງກະຊວງ MOES/EDED ຂອງກະຊວງ MOLSW |
| 2.2 | **ກົນໄກຮ້ອງທຸກ ສຳລັບປະຊາຊົນ ແລະກຳມະກອນ ທີ່ຖືກກະທົບ ໂດຍໂຄງການ**<br>ຮັບຮອງເອົາ ແລະປະຕິບັດ, ແລະອີງຕາມຄວາມຈຳເປັນ, ປັບປຸງກົນໄກສຳລັບການຮ້ອງທຸກແຮງງານ ໃນຖານະເປັນສ່ວນໜຶ່ງ ຂອງລະບຽບການຄຸ້ມຄອງແຮງງານ ໃນ ESMF. | • ປັບປຸງ ແລະຮັບຮອງເອົາກ່ອນປະຕິບັດກິດຈະກຳໂຄງການ.<br>• ປະຕິບັດຕະຫຼອດໄລຍະປະຕິບັດໂຄງການ. | • PCU/TVED ຂອງກະຊວງ MOES/EDED ຂອງກະຊວງ MOLSW<br>• ວິທະຍາໄລTVET |
| 2.3 | **ມາດຕະການດ້ານສຸຂະພາບ ແລະຄວາມປອດໄພວິຊາຊີບ (OHS)**<br>ນຳໃຊ້ມາດຕະການດ້ານສຸຂະພາບ ແລະຄວາມປອດໄພວິຊາຊີບ (OHS) ດັ່ງທີ່ກຳນົດໄວ້ໃນມາດຕະຖານການປະພຶດທາງສິ່ງແວດລ້ອມ ແລະລະບຽບການຄຸ້ມຄອງແຮງງານ ພາຍໃຕ້ ESMF. | • ປັບປຸງ ແລະຮັບຮອງເອົາພາຍຫຼັງມື້ມີຜົນສັກສິດ ຂອງໂຄງການ ແລະກ່ອນປະຕິບັດກິດຈະກຳໂຄງການ.<br>• ປະຕິບັດຕະຫຼອດໄລຍະປະຕິບັດໂຄງການ. | • PCU/TVED ຂອງກະຊວງ MOES/EDED ຂອງກະຊວງ MOLSW<br>• ວິທະຍາໄລTVET<br>• ນາຍຈ້າງ |
| **ESS3: ການປະຢັດຊັບພະຍາກອນ ແລະການປ້ອງກັນ ແລະຄຸ້ມຄອງມົນລະພິດ** | | | |

| | ມາດຕະການແລະວຽກງານສຳຄັນຕົ້ນຕໍ | ຂອບເວລາ | ພາກສ່ວນຮັບຜິດຊອບ |
|---|---|---|---|
| 3.1 | ແຜນຄຸ້ມຄອງສິ່ງເສດເຫຼືອເອເລັກໂຕຼນິກ:<br>ຄູ່ມືສຳລັບແຜນຄຸ້ມຄອງສິ່ງເສດເຫຼືອເອກເລັກໂຕຼນິກ ທີ່ຖືກກະກຽມ ແລະສະໜອງໃຫ້ໃນ ESMF.<br><br>ຮັບຮອງ ແລະປະຕິບັດ ແຜນຄຸ້ມຄອງສິ່ງເສດເຫຼືອເອກເລັກໂຕຼນິກ. | • ກ່ອນການຈັດຊື້ທຸກອຸປະກອນເອເລັກໂຕຼນິກ ແລະ<br>• ປະຕິບັດການຄຸ້ມຄອງສິ່ງເສດເຫຼືອເອກເລັກໂຕຼນິກຕະຫຼອດໄລຍະການປະຕິບັດໂຄງການ. | • PCU/TVED ຂອງກະຊວງ MOES/EDED ຂອງກະຊວງ MOLSW<br>• ວິທະຍາໄລTVET |
| 3.2 | ການນຳໃຊ້ຊັບພະຍາກອນຢ່າງມີປະສິດທິພາບ ແລະການປ້ອງກັນ ແລະຄຸ້ມຄອງມົນລະພິດ:<br>ລວມເອົາມາດຕະການນຳໃຊ້ຊັບພະຍາກອນຢ່າງມີປະສິດທິພາບ ແລະການປ້ອງກັນ ແລະຄຸ້ມຄອງມົນລະພິດ (ການຄວບຄຸມສຽງດັງ ແລະມົນລະພິດທາງອາກາດ, ການຄຸ້ມຄອງສິ່ງເສດເຫຼືອ ແລະວັດຖຸອັນຕະລາຍ) ໃນ ESCOP.<br>ນຳໃຊ້ ມາດຕະການຕະການປະຢັດຊັບພະຍາກອນ ແລະການປ້ອງກັນ ແລະຄຸ້ມຄອງມົນລະພິດ ຢູ່ໃນ ມາດຕະຖານການປະພຶດດ້ານສິ່ງແວດລ້ອມ ແລະສັງຄົມ ພາຍໃຕ້ ESMF.<br>ຕິດຕາມການປະຕິບັດມາດຕະການຕ່າງໆ ໃນລະຫວ່າງການເຮັດວຽກກໍ່ສ້າງຂະໜາດນ້ອຍ. | • ກ່ອນການປະເມີນໂຄງການ ແລະປະຕິບັດຕະຫຼອດໄລຍະປະຕິບັດໂຄງການ. | • PCU/TVED ຂອງກະຊວງ MOES/EDED ຂອງກະຊວງ MOLSW<br>• ວິທະຍາໄລTVET |
| **ESS4: ສຸຂະພາບ ແລະຄວາມປອດໄພຊຸມຊົນ** | | | |
| 4.1 | ຄວາມປອດໄພດ້ານການສັນຈອນ ແລະທົ່ນທາງ:<br>ນຳໃຊ້ມາດຕະການຄຸ້ມຄອງຄວາມສ່ຽງດ້ານຄວາມປອດໄພການສັນຈອນ ແລະທົ່ນທາງ ທີ່ລະບຸໄວ້ໃນ ESCOP ພາຍໃຕ້ ESMF. | • ກ່ອນການເລີ່ມຕົ້ນກິດຈະກຳໂຄງການ ແລະປະຕິບັດຕະຫຼອດໄລຍະປະຕິບັດໂຄງການ. | • PCU/TVED ຂອງກະຊວງ MOES/EDED ຂອງກະຊວງ MOLSW<br>• ວິທະຍາໄລTVET<br>• ນາຍຈ້າງ |
| 4.2 | ສຸຂະພາບ ແລະຄວາມປອດໄພ ຂອງຊຸມຊົນ:<br>ຮັບຮອງເອົາມາດຕະການດ້ານສຸຂະພາບ ແລະຄວາມປອດໄພ ຂອງຊຸມຊົນ (CHS)ໃນ ESMF ທີ່ແທດເໝາະກັບແຜນງານຝຶກອົບຮົມ ແລະສະຖານທີ່ເຮັດວຽກ ເພື່ອຄຸ້ມຄອງ | • ກ່ອນການເລີ່ມຕົ້ນກິດຈະກຳໂຄງການ ແລະປະຕິບັດຕະຫຼອດໄລຍະປະຕິບັດໂຄງການ. | • PCU/TVED ຂອງກະຊວງ MOES/EDED ຂອງກະຊວງ MOLSW |

| | ມາດຕະການແລະວຽກງານສຳຄັນຕົ້ນຕໍ | ຂອບເວລາ | ພາກສ່ວນຮັບຜິດຊອບ |
|---|---|---|---|
| | ຄວາມສ່ຽງ ທີ່ອາດເກີດຂຶ້ນດ້ານສຸຂະພາບ ແລະຄວາມປອດໄພ ສໍາລັບຄູອາຈານ ແລະ ນັກຮຽນ ທີ່ພົວພັນກັບການຝຶກອົບຮົມທັກສະ, ການເຮັດວຽກໃນສະຖານທີ່ເຮັດວຽກ ແລະວຽກເຮັດ ໃນອະນາຄົດ ຂອງນັກຮຽນ TVET ໃນສະຖານ ທີ່ເຮັດວຽກ ທີ່ອາດເປັນ ວຽກອັນຕະລາຍ ຫຼື ໃນສະພາບແວດລ້ອມທີ່ອັນຕະລາຍ. | | • ວິທະຍາໄລTVET |
| 4.3 | ຄວາມສ່ຽງດ້ານ ດ້ານການໃຊ້ຄວາມຮຸນແຮງທາງເພດ ແລະການຂູດຮີດ ແລະຂູກຮານ ທາງເພດ (GBV ແລະ SEA):<br>ກະກຽມ, ຮັບຮອງເອົາ ແລະປະຕິບັດ ຄູ່ມືການບໍລິຫານຄວາມສ່ຽງດ້ານການໃຊ້ຄວາມຮຸນ ແຮງທາງເພດ ແລະການຂູດຮີດ ແລະຂູກຮານທາງເພດ ທີ່ອາດເກີດຂຶ້ນ ທີ່ຖືກອອກແບບ ເພື່ອບໍລິຫານຄວາມສ່ຽງ ຂອງກິດຈະກໍາໂຄງການ ທີ່ຈະພາໃຫ້ເກີດມີຄວາມຮຸນແຮງທາງ ເພດ, ລວມທັງ ຄວາມຮຸນແຮງຕໍ່ນັກຮຽນ, ການຂູກຮານທາງເພດ ແລະຄວາມສ່ຽງ ທີ່ຈະ ມີການຈໍາແນກຕໍ່ກຸ່ມຄົນດ້ອຍໂອກາດ (ຕາມເພດ ຫຼື ຊົນເຜົ່າ) ທັງ ສໍາລັບ ນັກຮຽນ ແລະ ຄູອາຈານ.<br>ຄູ່ມື ທີ່ລວມເອົາ ມາດຖານການປະພຶດໂດຍທົ່ວໄປ ທີ່ຈະຖືກເອົາເຂົ້າໃນ ESMF ອີງຕາມ ແຜນປະຕິບັດງານສະເພາະ ທີ່ຈະຖືກສ້າງຂຶ້ນໃຫ້ແທດເໝາະກັບແຕ່ລະສະພາບການ ໃນ ປະເທດ.<br>ແຜນງານຝຶກອົບຮົມ ແລະເຜີຍແຜ່ຂໍ້ມູນຂ່າວສານ ທີ່ແນໃສ່ພະນັກງານ ທີ່ເຮັດວຽກ ກ່ຽວຂ້ອງກັບສິ່ງແວດລ້ອມ ໃນໂຄງການ ແລະພະນັກງານອື່ນ ຂອງໂຄງການ. | • ໃນໄລຍະການຈັດຊື້ຈັດຈ້າງ, ກ່ອນ ການເລີ່ມຕົ້ນກິດຈະກໍາໂຄງການ ແລະປະຕິບັດຕະຫຼອດໄລຍະປະຕິບັດ ໂຄງການ. | • PCU/TVED ຂອງກະຊວງ MOES/EDED ຂອງກະຊວງ MOLSW<br>• ວິທະຍາໄລTVET<br>• ທີ່ປຶກສາ ທີ່ເຮັດວຽກປະຈໍາຢູ່ ວິທະຍາໄລTVET |
| 4.4 | ຄວາມສ່ຽງດ້ານ GBV ແລະ SEA ໃນລະຫວ່າງການຈັດຕັ້ງປະຕິບັດໂຄງການ:<br>ວ່າຈ້າງທີ່ປຶກສາພາຍໃນປະເທດທີ່ເປັນແມ່ຍິງ ແລະໄດ້ຮັບການຝຶກອົບຮົມ (ທີ່ປຶກສາ ຫຼື ຜູ້ ໃຫ້ບໍລິການທີ່ມີຢູ່) ເພື່ອອໍານວຍຄວາມສະດວກການເປີດເຜີຍຂໍ້ມູນ ແລະການສົ່ງບັນຫາຕໍ່ ຢ່າງປອດໄພ ທີ່ອາດໄດ້ຮັບໄດ້ ຜ່ານກົນໄກແກ້ໄຂຄໍາຮ້ອງທຸກຂອງໂຄງການ ແລະສາຍ ດ່ວນ ໃຫ້ຄໍາປຶກສາໂດຍຄູອາຈານ. | • ມີຄູ່ມື ຂອງທີ່ປຶກສາ ກ່ອນການ ປະຕິບັດ | • PCU/TVED ຂອງກະຊວງ MOES/EDED ຂອງກະຊວງ MOLSW<br>• ວິທະຍາໄລTVET |
| **ESS5:** ການວຽນຄືນທີ່ດິນ, ການຈໍາກັດການນໍາໃຊ້ດິນ ແລະການຍົກຍ້າຍຈັດສັນແບບສະໝັກ | | | |

| | ມາດຕະການແລະວຽກງານສຳຄັນຕົ້ນຕໍ | ຂອບເວລາ | ພາກສ່ວນຮັບຜິດຊອບ |
|---|---|---|---|
| 5.1 | ແຜນຍົກຍ້າຍຈັດສັນ:<br>• ບໍ່ກ່ຽວຂ້ອງ. ໂຄງການນີ້ ບໍ່ມີກິດຈະກຳໃດ ທີ່ຕ້ອງໄດ້ມີການວຽນຄືນທີ່ດິນ ຫຼື ການຍົກຍ້າຍຈັດສັນ, ເຖິງແນວໃດກໍ່ຕາມ ເຄື່ອງມືກວດກາ ໃນ ESMF ຈະລະບຸ ທຸກບັນຫາ ກ່ຽວກັບການວຽນຄືນທີ່ດິນ ຫຼື ການຍົກຍ້າຍຈັດສັນ. ຖ້າມີການສະເໜີກິດຈະກຳໃດໜຶ່ງ ຂອງໂຄງການ ທີ່ຈະມີການວຽນຄືນທີ່ດິນ ຫຼື ການຍົກຍ້າຍຈັດສັນ, ກິດຈະກຳທີ່ສະເໜີດັ່ງກ່າວ ຈະບໍ່ຢູ່ໃນເງື່ອນໄຂຂອງການສະໜອງທຶນ ພາຍໃຕ້ໂຄງການນີ້. | • ມີການກວດກາຂໍ້ສະເໜີໂຄງການ ສຳລັບວຽກກໍ່ສ້າງຂະໜາດນ້ອຍ ກ່ອນມີການອະນຸມັດ | • PCU/TVED ຂອງກະຊວງ MOES/EDED ຂອງກະຊວງ MOLSW |
| 5.2 | ກົນໄກຮ້ອງທຸກ<br>• ບໍ່ກ່ຽວຂ້ອງ. ໂຄງການນີ້ ບໍ່ມີກິດຈະກຳໃດ ທີ່ຕ້ອງໄດ້ມີການວຽນຄືນທີ່ດິນ ຫຼື ການຍົກຍ້າຍຈັດສັນ. | | |
| | **ESS6: ການອະນຸລັກຊີວະນາພັນ ແລະການຄຸ້ມຄອງຊັບພະຍາກອນສິ່ງມີຊີວິດຕາມທຳມະຊາດ ແບບຍືນຍົງ** | | |
| | • ຄວາມສ່ຽງ ແລະຜົນກະທົບ ຕໍ່ຊີວະນາພັນ:<br>• ບໍ່ກ່ຽວຂ້ອງ. ໂຄງການນີ້ ຈະບໍ່ກະທົບສິ່ງມີຊີວິດຕາມທຳມະຊາດ ຫຼື ຊີວະນາພັນໃດ ແລະບໍ່ມີສ່ວນກ່ຽວຂ້ອງກັບນຳໃຊ້ວັດຖຸດິບທຳມະຊາດ ຫຼື ນຳໃຊ້ຊັບພະຍາກອນທີ່ເປັນສິ່ງທີ່ມີຊີວິດຕາມທຳມະຊາດ. ເງື່ອນນີ້ ແມ່ນຖືກລວມເຂົ້າໃນບັນຊີກິດຈະກຳທີ່ບໍ່ສາມາດປະຕິບັດໄດ້ ແລະເງື່ອນໄຂຂອງການກວດກາໂຄງການ. | | |
| | **ESS7: ຄົນພື້ນເມືອງ ແລະຄົນທີ່ຢູ່ທະເລຊາຍຊັບຊາຮາລາ ທີ່ເປັນຊຸມຊົນທ້ອງຖິ່ນພື້ນເມືອງ ທີ່ໄດ້ຮັບການອານຸລັກປະຫວັດສາດ** | | |
| | ແຜນການເຮັດວຽກກັບຊົນເຜົ່າ:<br>• ກະກຽມ, ຮັບຮອງ ແລະປະຕິບັດມາດຕະການຕ່າງໆ ສຳລັບການມີສ່ວນຮ່ວມທາງສັງຄົມ ຂອງຊົນເຜົ່າຕ່າງໆ ໃນກິດຈະກຳຂອງໂຄງການ. | • ມາດຕະການໃນ ESMF ແລະSEP ກ່ອນການປະເມີນເພື່ອອະນຸມັດໂຄງການໂດຍ ສະມາຄົມ<br>• ມາດຕະການຖືກຮັບຮອງກ່ອນການປະຕິບັດກິດຈະກຳໂຄງການ | • PCU/TVED ຂອງກະຊວງ MOES/EDED ຂອງກະຊວງ MOLSW<br>• ວິທະຍາໄລTVET |

| ມາດຕະການແລະວຽກງານສຳຄັນຕົ້ນຕໍ | ຂອບເວລາ | ພາກສ່ວນຮັບຜິດຊອບ |
|---|---|---|
| • ກົນໄກແກ້ໄຂການຮ້ອງທຸກ:<br>• ກົນໄກແກ້ໄຂການຮ້ອງທຸກ (GRM) ສຳລັບໂຄງການນີ້ ທີ່ຖືກດັດປັບ ສຳລັບຜູ້ເຂົ້າຝຶກອົບຮົມ ແລະຜູ້ຊອກວຽກເຮັດ ທີ່ເປັນຊົນເຜົ່າ ແມ່ນໄດ້ຮັບການສ້າງຂຶ້ນ ພາຍໃຕ້ແຜນການເຮັດວຽກກັບຜູ້ມີສ່ວນຮ່ວມ – ເບິ່ງຂໍ້ 10.2 | • ກ່ອນເລີ່ມທຸກກິດຈະກຳຂອງໂຄງການ ທີ່ກະທົບຕໍ່ຜູ້ເຂົ້າຝຶກອົບຮົມ ແລະຜູ້ຊອກວຽກເຮັດ ທີ່ເປັນຊົນເຜົ່າ, ແລະປະຕິບັດຕະຫຼອດໄລຍະຂອງໂຄງການ | • PCU/TVED ຂອງກະຊວງ MOES/EDED ຂອງກະຊວງ MOLSW<br>• ວິທະຍາໄລTVET |
| **ESS 8:** ມໍລະດົກທາງວັດທະນະທຳ | | |
| **ການຄົ້ນພົບວັດຖຸບູຮານທີ່ມີຄ່າໂດຍບັງເອີນ:**<br>• ມີການປະເມີນວ່າ ໃນວຽກກໍ່ສ້າງຂະໜາດນ້ອຍ ຂອງໂຄງການ ບໍ່ມີຄວາມເປັນໄປໄດ້ ຂອງການຄົ້ນພົບວັດຖຸບູຮານ, ວັດຖຸທີ່ມີຄວາມສຳຄັນທາງວັດທະນະທຳ ຫຼື ປະຫວັດສາດ. ເຖິງວ່າ ສຳລັບວຽກກໍ່ສ້າງ ຈະມີການຕັດສິນກຳນົດ ພຽງແຕ່ ໃນລະຫວ່າງການດຳເນີນໂຄງການເທົ່ານັ້ນ, ລະບຽບການພື້ນຖານ ຈະຖືກສ້າງຂຶ້ນ ພາຍໃຕ້ກົນເກນການປະພຶດທາງສິ່ງແວດລ້ອມ ແລະສັງຄົມ ໃນ ESMF. | • ກ່ອນເລີ່ມວຽກກໍ່ສ້າງ | • ວິທະຍາໄລTVET<br>• PCU/TVED ຂອງກະຊວງ MOES/EDED ຂອງກະຊວງ MOLSW<br>• ຜູ້ຮັບເໝົາກໍ່ສ້າງ |
| **ESS 9:** ສື່ກາງທາງການເງິນ | | |
| **ESMS:**<br>• ບໍ່ກ່ຽວຂ້ອງ. ການສະໜອງທຶນ ຂອງທະນາຄານໂລກ ສຳລັບໂຄງການນີ້ ບໍ່ມີສື່ກາງທາງການເງິນ (FIs). | | |
| **ESS 10:** ການເຮັດວຽກກັບຜູ້ມີສ່ວນຮ່ວມ ແລະການເປີດເຜີຍຂໍ້ມູນ | | |
| **ການກະກຽມ ແລະຈັດຕັ້ງປະຕິບັດແຜນການເຂົ້າຮ່ວມຂອງຜູ້ມີສ່ວນຮ່ວມ**<br>• ກະກຽມ, ປັບປຸງ, ຮັບຮອງ ແລະປະຕິບັດແຜນການເຮັດວຽກກັບຜູ້ມີສ່ວນຮ່ວມ (SEP) ເພື່ອຮັບປະກັນການເຮັດວຽກ ກັບຊຸມຊົນທີ່ຖືກກະທົບຈາກໂຄງການ ແລະຜູ້ມີສ່ວນຮ່ວມພາກສ່ວນອື່ນ ຕະຫຼອດໄລຍະການປະຕິບັດໂຄງການ. | • ກະກຽມ SEPກ່ອນການປະເມີນໂຄງການ<br>• ປະຕິບັດແລະປັບປຸງຕາມຄວາມຈຳເປັນຕະຫຼອດໄລຍະການປະຕິບັດໂຄງການ | • PCU/TVED ຂອງກະຊວງ MOES/EDED ຂອງກະຊວງ MOLSW<br>• ວິທະຍາໄລTVE |

| | ມາດຕະການແລະວຽກງານສຳຄັນຕົ້ນຕໍ | ຂອບເວລາ | ພາກສ່ວນຮັບຜິດຊອບ |
|---|---|---|---|
| | **ກົນໄກແກ້ໄຂຄຳຮ້ອງທຸກ ຂອງໂຄງການ:**<br>• ກົນໄກແກ້ໄຂການຮ້ອງທຸກສະເພາະ ສຳລັບກຸ່ມສະເພາະ ຂອງຜູ້ມີສ່ວນຮ່ວມ ຂອງໂຄງການ ຈະຖືກສ້າງຂຶ້ນ ແລະປະຕິບັດ ເພື່ອແກ້ໄຂຄວາມກັງວົນ ແລະການຮ້ອງທຸກ ອີງຕາມແຜນການເຮັດວຽກກັບຜູ້ມີສ່ວນຮ່ວມ. | • GRM ຈະຖືກສ້າງຕັ້ງ ແລະແຈ້ງໃຫ້ຜູ້ມີສ່ວນຮ່ວມຊາບ ກ່ອນເລີ່ມຕົ້ນກິດຈະກຳໂຄງການ, ແລະຈະຖືກຮັກສາໄວ້ ແລະດຳເນີນການ ຕະຫຼອດໄລຍະການປະຕິບັດໂຄງການ | • PCU/TVED ຂອງກະຊວງ MOES/EDED ຂອງກະຊວງ MOLSW<br>• ວິທະຍາໄລTVE |
| ການລາຍງານກ່ຽວກັບຂີດຄວາມສາມາດ (ການຝຶກອົບຮົມ) | | | |
| | **ການຝຶກອົບຮົມ ແລະກຸ່ມເປົ້າໝາຍ:**<br>• ການຝຶກອົບຮົມພື້ນຖານ ກ່ຽວກັບ ESF/ESSs ໃນຂອບການຄຸ້ມຄອງສິ່ງແວດລ້ອມ ແລະສັງຄົມ ຂອງທະນາຄານໂລກ: ເຈົ້າໜ້າທີ່ລັດ ທີ່ເຮັດວຽກກັບໂຄງການນີ້, ພະນັກງານໂຄງການ | • ໃນໄລຍະກະກຽມໂຄງການ ພາຍໃນ 3 ເດືອນ ພາຍຫຼັງເລີ່ມໂຄງການ ແລະຈາກນັ້ນ ປີລະຄັ້ງ | • ທີ່ປຶກສາດ້ານ E&S ແລະຜູ້ປະສານງານຕົ້ນຕໍ ຈາກ PCU |
| | ຝຶກອົບຮົມກ່ຽວກັບການປະຕິບັດ ESMF ຂອງໂຄງການ: ຜູ້ຈັດການໂຄງການ, ຜູ້ກວດກາ, ຜູ້ປະສານງານຕົ້ນຕໍ ແລະພະນັກງານວິຊາການ | ພາຍໃນ 6 ເດືອນ ພາຍຫຼັງເລີ່ມໂຄງການ ແລະຈາກນັ້ນ ປີລະຄັ້ງ | ທີ່ປຶກສາດ້ານ E&S ແລະຜູ້ປະສານງານຕົ້ນຕໍ ຈາກ PCU |
| | ຝຶກອົບຮົມກ່ຽວກັບການກວດກາກິດຈະກຳໂຄງການ ເພື່ອກຳນົດຄວາມສ່ຽງ ແລະຜົນກະທົບທາງສິ່ງແວດລ້ອມ ແລະສັງຄົມ, ການນຳໃຊ້ມາດຕະຖານການປະພຶດທາງສິ່ງແວດລ້ອມ ແລະສັງຄົມ: ຜູ້ຈັດການໂຄງການ, ຜູ້ກວດກາ ແລະຜູ້ປະສານງານຕົ້ນຕໍ | ອີງຕາມການວາງແຜນວຽກປະຈຳປີ | ທີ່ປຶກສາດ້ານ E&S ແລະຜູ້ປະສານງານຕົ້ນຕໍ ຈາກ PCU |
| | • ຝຶກອົບຮົມກ່ຽວກັບທັດສະນະບົດບາດຍິງຊາຍ ແລະທັດສະນະດ້ານຊົນເຜົ່າ:ຜູ້ຈັດການໂຄງການ, ຈຸດປະສານງານຕົ້ນຕໍ ແລະອຳນວຍການໂຮງຮຽນ<br>• ຝຶກອົບຮົມກ່ຽວກັບການໃຊ້ຄວາມຮຸນແຮງທາງເພດ (GBV) ເພື່ອໃຫ້ມີການເປີດເຜີຍຂໍ້ມູນ ແລະການສື່ງຕໍ່ ທີ່ປອດໄພ (GRM): ຜູ້ຈັດການໂຄງການ, ຜູ້ກວດກາ, ຜູ້ປະສານງານຕົ້ນຕໍ ແລະອຳນວຍການໂຮງຮຽນ | ພາຍໃນ 6 ເດືອນ ພາຍຫຼັງເລີ່ມໂຄງການ ແລະຈາກນັ້ນ ປີລະຄັ້ງ | ທີ່ປຶກສາດ້ານ E&S ແລະຜູ້ປະສານງານຕົ້ນຕໍ ຈາກ PCU |
| | ກົນໄກແກ້ໄຂຄຳຮ້ອງທຸກ (ການເປີດເຜີຍຂໍ້ມູນ ແລະການສົ່ງຕໍ່ ທີ່ປອດໄພ): ຜູ້ຈັດການໂຄງການ, ຜູ້ກວດກາ, ຈຸຜູ້ປະສານງານຕົ້ນຕໍ ແລະອຳນວຍການໂຮງຮຽນ | ພາຍໃນ 6 ເດືອນ ພາຍຫຼັງເລີ່ມໂຄງການ ແລະຈາກນັ້ນ ປີລະຄັ້ງ | ທີ່ປຶກສາດ້ານ E&S ແລະຜູ້ປະສານງານຕົ້ນຕໍ ຈາກ PCU |

| ມາດຕະການແລະວຽກງານສຳຄັນຕົ້ນຕໍ | | ຂອບເວລາ | ພາກສ່ວນຮັບຜິດຊອບ |
|---|---|---|---|
| | ສຸຂະພາບ ແລະຄວາມປອດໄພ ຂອງນັກຮຽນ ແລະຄູອາຈານ: ຜູ້ອອກແບບຫຼັກສູດ, ຕົວແທນຄູອາຈານ, ອຳນວຍການໂຮງຮຽນ | ອີງຕາມການວາງແຜນວຽກປະຈຳປີ | ທີ່ປຶກສາດ້ານ E&S ແລະຜູ້ປະສານງານຕົ້ນຕໍ ຈາກ PCU |
| | ຄວາມປອດໄພດ້ານສິ່ງແວດລ້ອມ, ສຸຂະພາບ ແລະຄວາມປອດໄພ ສຳລັບວຽກກໍ່ສ້າງຂະໜາດນ້ອຍ: ຜູ້ຄຸມວຽກ ແລະກຳມະກອນ ຂອງຜູ້ຮັບເໝົາກໍ່ສ້າງ | ກ່ອນເລີ່ມແຕ່ລະວຽກກໍ່ສ້າງ | ທີ່ປຶກສາດ້ານ E&S ແລະຜູ້ປະສານງານຕົ້ນຕໍ ຈາກ PCU |
| | ວຽກງານດ້ານດິນຟ້າອາກາດ ແລະການວາງແຜນສຸກເສີນ: ອຳນວຍການໂຮງຮຽນ ແລະຄູອາຈານ | ອີງຕາມການວາງແຜນວຽກປະຈຳປີ | ທີ່ປຶກສາດ້ານ E&S ແລະຊ່ຽວຊານ ຈາກ PCU |